ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ: 691 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ: 17.8.2015

**ຄຳສັ່ງ**

**ຂອງລັດຖະມົນຕີວ່າການ**

**ກ່ຽວກັບການຈັດຕັ້ງຕິດຕາມ, ແກ້ໄຂ ແລະ ກວດກາວຽກສຸກເສີນ**

**ໃນລະດູຝົນປີ 2015**

ເຖິງ: ທ່ານ ຫົວໜ້າພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ການຈັດຕັ້ງແກ້ໄຂວຽກສ້ອມແປງຂົວ-ທາງສຸກເສີນຕາມເສັ້ນທາງຫຼວງແຫ່ງຊາດ ແລະ ເສັ້ນທາງຫຼວງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ.
- ອີງຕາມບົດບັນທຶກກອງປະຊຸມຄະນະນຳກະຊວງ ຍທຂ ປະຈຳເດືອນ 7/2015.

ເພື່ອເປັນການກະກຽມຄວາມພ້ອມ ໃນການຮັບມືກັບສະພາບສຸກເສີນທີ່ອາດເກີດຂຶ້ນໃນລະດູຝົນ ປີ 2015 ນີ້, ແນ່ໃສ່ຮັບປະກັນໃນການສັນຈອນຢ່າງໂລ່ງລຽນ ແລະ ມີຄວາມປອດໄພ ຕາມທາງຫຼວງ ແຕ່ລະປະເພດ ໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີວ່າການ ອອກຄຳສັ່ງ:

1.) **ທາງຫຼວງແຫ່ງຊາດ:** ມອບໃຫ້ ຫົວໜ້າກົມຂົວທາງ ສົມທົບກັບ ຫົວໜ້າພະແນກ ຍທຂ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຈັດແບ່ງຄວາມຮັບຜິດຊອບກັນ ເພື່ອລົງຊີ້ນຳ ແລະ ຕິດຕາມການຈັດຕັ້ງແກ້ໄຂວຽກສຸກເສີນ ທີ່ອາດເກີດຂຶ້ນຕາມທາງຫຼວງແຫ່ງຊາດ ໃນລະດູຝົນປີ 2015 ຢ່າງໃກ້ຊິດ ແລະທົ່ວເຖິງ ໃນຂອບເຂດທົ່ວປະເທດ. ໃນນີ້ ໃຫ້ຈັດຕັ້ງຜູ້ຮັບຜິດຊອບຢູ່ແຕ່ລະຕອນທາງ ໂດຍປະກອບມີວິຊາການ ຂອງໂຄງການບູລະນະຮັກສາທາງຫຼວງປະຈຳເຂດ, ວິຊາການ ຂອງພະແນກ ຍທຂ ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ, ໂດຍຈັດຕັ້ງເອົາບໍລິສັດສ້ອມແປງທາງ ທີ່ປະຈຳຢູ່

ແຕ່ລະຕອນທາງນັ້ນ ກຽມພ້ອມດ້ານພາຫະນະ ແລະ ວັດສະດຸທີ່ຈຳເປັນ ເພື່ອເຝົ້າຕິດຕາມສະພາບສຸກເສີນທີ່ອາດເກີດຂຶ້ນຢູ່ແຕ່ລະຕອນທາງ ພ້ອມທັງຈັດຕັ້ງແກ້ໄຂໃຫ້ທັນການ ເມື່ອເກີດເຫດການສຸກເສີນຂຶ້ນຢູ່ແຕ່ລະຕອນທາງ, ເພື່ອຮັບປະກັນການສັນຈອນຕາມທາງຫຼວງແຫ່ງຊາດໄປມາ ໄດ້ຢ່າງໂລ່ງລ່ຽນ ແລະ ປອດໄພ.

2.) **ທາງຫຼວງທ້ອງຖິ່ນ (ທາງຫຼວງແຂວງ, ທາງຫຼວງເມືອງ ແລະ ທາງເທດສະບານ):** ການຈັດຕັ້ງປະຕິບັດ ສະເໜີມອບໃຫ້ ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເປັນຜູ້ຊີ້ນຳພະ ແນກ ຍທຂ ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ ເປັນເຈົ້າການຈັດຕັ້ງ ເຝົ້າຕິດຕາມ ແລະ ແກ້ໄຂວຽກສຸກເສີນທີ່ເກີດຂຶ້ນໃຫ້ທັນການ ສຳລັບເສັ້ນທາງໃນຕົວເມືອງ (ເທດສະບານເມືອງ) ໃຫ້ສຸມໃສ່ແກ້ໄຂຮ່ອງນ້ຳ, ລະບົບສະນ້ຳແຄມທາງ ແລະ ການແກ້ໄຂສ້ອມແປງໜ້າທາງທີ່ເປ່ເພເປັນຂຸມ ໃຫ້ທັນການ ຮັບປະກັນໄດ້ສະພາບການສັນຈອນຕາມທາງຫຼວງທ້ອງຖິ່ນ ແລະ ທາງຫຼວງເທດສະບານໃຫ້ໄປມາໄດ້ຢ່າງໂລ່ງລ່ຽນ ແລະ ປອດໄພ. ສຳລັບການສະເໜີງົບປະມານຊຳລະໃຫ້ແກ່ການ ແກ້ໄຂວຽກສຸກເສີນຕາມທາງຫຼວງທ້ອງຖິ່ນ ແມ່ນສະເໜີທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ມອບໃຫ້ພະແນກ ຍທຂ ບັນດາແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການສະຫຼຸບສັງລວມ ແລະ ລາຍງານຫາກະຊວງ ຍທຂ ເປັນຜູ້ສັງລວມລາຍງານ ຫາລັດຖະບານ ເພື່ອພິຈາລະນາ.

3.) **ການເກັບກຳ, ບັນທຶກ ແລະ ຢັ້ງຢືນບໍລິມາດວຽກ ແລະ ມູນຄ່າ:** ມອບໃຫ້ ຫົວໜ້າກົມຂົວທາງ ເປັນເຈົ້າການສົມທົບກັບ ພະແນກ ຍທຂ ບັນດາແຂວງ, ນະຄອນຫຼວງວຽງ ຈັນ ຊີ້ນຳໂຄງການບູລະນະຮັກສາທາງຫຼວງປະຈຳເຂດ ແລະ ຫ້ອງການ ຍທຂ ເມືອງ ເກັບກຳ, ບັນທຶກ ແລະ ຢັ້ງຢືນໜ້າວຽກ, ບໍລິມາດວຽກທີ່ເກີດຂຶ້ນໃຫ້ຖືກຕົວຈິງ ໂດຍມີການການເກັບກຳ, ບັນທຶກ ແລະ ເຊັນຢັ້ງຢືນຈາກວິຊາການປະຈຳສະໜາມ. ສຳລັບລາຄາຫົວໜ່ວຍຄິດໄລ່ເພື່ອຊຳລະນັ້ນ, ຖ້າຕອນທາງໃດຫາໄດ້ມີການປະມູນເອົາຜູ້ຮັບຜິດຊອບ ແຕ່ລະຕອນທາງແລ້ວ ໃຫ້ເອົາຕາມລາຄາຫົວໜ່ວຍທີ່ປະມູນນັ້ນເລີຍ, ໃນກໍລະນີມີບັນດາໜ້າວຽກທີ່ເກີດຂຶ້ນໃໝ່ ແມ່ນໃຫ້ພ້ອມກັນຄິດໄລ່ຕາມການສິ້ນເປືອງຕົວຈິງ.

4.) **ການລາຍງານ:** ມອບໃຫ້ ກົມຂົວທາງ ແລະ ພະແນກ ຍທຂ ບັນດາແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການຕິດຕາມກວດກາ ແລະ ສະຫຼຸບລາຍງານໃຫ້ຫົວໜ້າຫ້ອງວ່າການແຂວງ, ນະຄອນຫຼວງວຽງຈັນ ແລະ ກະຊວງ ຍທຂ ຊາບເປັນແຕ່ລະອາທິດ, ຖ້າກໍລະນີມີວຽກສຸກເສີນເກີດຂຶ້ນໃໝ່ ໃຫ້ລາຍງານໃຫ້ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຜູ້ຊີ້ນຳ ແລະ ລັດຖະມົນຕີວ່າການ ກະຊວງ ຍທຂ ຊາບໂດຍດ່ວນ ເພື່ອມີທິດຊີ້ນຳແກ້ໄຂໃຫ້ທັນການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ

ລັດຖະມົນຕີວ່າການ

ດຣ ບຸນຈັນ ສິນທະວົງ

ບ່ອນນຳສົ່ງ:

| | |
|---|---|
| - ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ | 01 ສະບັບ. |
| - ກົມຂົວທາງ | 01 ສະບັບ. |
| - ພະແນກ ຍທຂ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ | 01 ສະບັບ. |
| - ສຳເນົາເກັບມ້ຽນ | 02 ສະບັບ. |